ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

1807 - - ...
ເລກທີ................/ຫອຄ.ກຂອ
ນະຄອນຫຼວງວຽງຈັນ, ວັນທີ..20..... ຕຸລາ 2020

# ແຈ້ງການ

**ເຖິງ:** - ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດທາງການຄ້າ;
- ຜູ້ປະກອບການສົ່ງອອກທີ່ນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າພາຍໃຕ້ຂອບສັນຍາການຄ້າດ້ານສິນຄ້າອາຊຽນ (Form D).

**ເລື່ອງ:** ການຈັດຕັ້ງປະຕິບັດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າສະບັບປັບປຸງໃໝ່ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ.

- ອີງຕາມ ແຈ້ງການຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບ ການຮັບຮອງເອົາອານຸສັນຍາ ສະບັບທີ 01 ເພື່ອປັບປຸງສັນຍາການຄ້າສິນຄ້າອາຊຽນ (First Protocol to amend the ASEAN Trade in Goods Agreement) ສະບັບເລກທີ 451/ຫສນຍ, ລົງວັນທີ 03 ເມສາ 2020;
- ອີງຕາມ ຜົນກອງປະຊຸມທາງໄກຂອງລັດຖະມົນຕີເສດຖະກິດອາຊຽນ ຄັ້ງທີ 52 ແລະ ກອງປະຊຸມສະພາເຂດການຄ້າເສລີອາຊຽນ ຄັ້ງທີ 34 ຈັດຂຶ້ນໃນວັນທີ 25 ສິງຫາ 2020.

ຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງ ທ່ານ ຊາບວ່າ ນັບຕັ້ງແຕ່ວັນທີ <u>**21 ທັນວາ 2020**</u> ເປັນຕົ້ນໄປ ແມ່ນເລີ່ມນຳໃຊ້ແບບພິມ (Form D) ສະບັບປັບປຸງໃໝ່ພຽງຢ່າງດຽວ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ ຊຶ່ງມີການປັບປຸງບາງເນື້ອໃນດ້ານຫຼັງແບບພິມ (ໄດ້ຄັດຕິດ Form D ສະບັບປະຈຸບັນ ແລະ ສະບັບປັບປຸງໃໝ່ມາພ້ອມນີ້) ດັ່ງລາຍລະອຽດລຸ່ມນີ້:

- ສຳລັບ Form D ສະບັບປັບປຸງໃໝ່ ໄດ້ເພີ່ມຂໍ້ທີ 10 ເຂົ້າຕື່ມ ໂດຍມີຄຳເວົ້າທີ່ວ່າ "FOB Value: This is applicable for goods exported from and imported by Kingdom of Cambodia, Republic of Indonesia and Lao People's Democratic Republic and where the Regional Value Content (RVC) criteria is applied, by providing the FOB Value of the goods in Box 9" ໝາຍຄວາມວ່າ ເວລາການຈັດຕັ້ງປະຕິບັດ ການສົ່ງອອກ ແລະ ນຳເຂົ້າສິນຄ້າ ໄປລາຊະອານາຈັກ ກຳປູເຈຍ, ສາທາລະນະລັດ ອິນໂດເນເຊຍ ແລະ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ ທີ່ນຳໃຊ້ກົດການສ້າງມູນຄ່າເພີ່ມພາຍໃນກຸ່ມອາຊຽນບໍ່ຫຼຸດ 40% (RVC 40%) ແມ່ນຕ້ອງລະບຸລາຄາ FOB ຂອງສິນຄ້າໃສ່ໃນຫ້ອງທີ 9 ຂອງ Form D.

- ຂໍ້ທີ 11 ໃນ Form D ສະບັບປະຈຸບັນແມ່ນ ຖືກຍ້າຍມາເປັນຂໍ້ 12 ໃນ Form D ສະບັບປັບປຸງໃໝ່ ໂດຍປ່ຽນຈາກຄໍາເວົ້າທີ່ວ່າ "BACK-TO-BACK CERTIFICATE OF ORIGIN: In case of Back-to-Back CO, in accordance with Rule 11 (Back-to-Back CO) of Annex 8 of the ATIGA, the Back-to-Back CO box should be ticked (√)" **ມາເປັນ** "BACK-TO-BACK CERTIFICATE OF ORIGIN: In case of Back-to-Back CO, in accordance with Rule 11 (Back-to-Back CO) of Annex 8 of the ATIGA, the Back-to-Back CO box should be ticked (√) and the reference number and the date of issuance of the origin CO (Form D) shall be indicated in Box 7" ໝາຍຄວາມວ່າ ໃນເວລາຈັດຕັ້ງປະຕິບັດການສົ່ງອອກແບບຕໍ່ເນື່ອງ ໂດຍປະຕິບັດຕາມລະບຽບແຫຼ່ງກໍາເນີດສິນຄ້າ ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ ທີ່ລະບຸໄວ້ໃນລະບຽບທີ 11 ໃນເອກະສານຄັດຕິດທີ 8 ຕ້ອງໄດ້ໃສ່ເຄື່ອງໝາຍຕິກ (√) ໃສ່ຫ້ອງສົ່ງອອກແບບຕໍ່ເນື່ອງ (Back-to-Back CO) ພ້ອມທັງລະບຸເລກທີ ແລະ ວັນທີອອກ Form D ຕົ້ນສະບັບ ລົງໃນຫ້ອງທີ 7 ຂອງ Form D ທີ່ອອກໃໝ່.

**ໝາຍເຫດ:** ສໍາລັບການສັ່ງພິມ Form D ໃນໄລຍະນີ້ບໍ່ຄວນສັ່ງເປັນຈໍານວນຫຼາຍ ເພື່ອຫຼີກລ້ຽງການນໍາໃຊ້ບໍ່ໝົດເຮັດໃຫ້ສິ້ນເປືອງງົບປະມານໂດຍບໍ່ຈໍາເປັນ.

ຂໍ້ມູນເພີ່ມເຕີມສາມາດເຂົ້າເບິ່ງໄດ້ທີ່ເວັບໄຊສູນຂໍ້ມູນຂ່າວສານທາງດ້ານການຄ້າຂອງ ສປປ ລາວ: www.laotradeportal.gov.la ຫຼື ສາມາດຕິດຕໍ່ພົວພັນ ພະແນກຄຸ້ມຄອງແຫຼ່ງກໍາເນີດສິນຄ້າ, ກົມການນໍາເຂົ້າ ແລະ ສົ່ງອອກ, ໂທ: +856 21 450 255, ອີເມວ: roodivision.laopdr@gmail.com.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ກະກຽມຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

**ຫົວໜ້າຫ້ອງການ**

ກະຊວງອຸດສາຫະກໍາ ແລະ ການຄ້າ
ຫ້ອງການ

ນ. ບານສະຕິ ເທບພະວົງ